ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ເຜີຍແຜ່ການເລືອກຕັ້ງ ສສຊ-ສສຂ, ຕິດພັນກັບການຄົ້ນຄວ້າແນວຄິດ ໄກສອນ ພົມວິຫານ






ອົງຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງກອງປະຊຸມເຜີຍແຜ່-ເຊື່ອມຊຶມເອກະສານເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX, ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ II, ຕິດພັນກັບການຄົ້ນຄວ້າແນວຄິດ ໄກສອນ ພົມວິຫານ ຢ່າງເປັນທາງການໃນວັນທີ 08 ມັງກອນ 2021 ທີ່ສະຖາບັນການທະນາຄານ, ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເປັນປະທານຂອງສະຫາຍນາງ ວັດທະນາ ດາລາລອຍ ກຳມະການປະຈຳພັກ, ຮອງຜູ້ວ່າການ ທຫລ; ພ້ອມນີ້, ກໍ່ມີບັນດາສະຫາຍຄະນະປະຈຳພັກ-ຄະນະພັກ ທຫລ, ຄະນະໜ່ວຍພັກ, ຄະນະພັກຮາກຖານ ແລະ ພະນັກງານຫຼັກແຫຼ່ງເຂົ້າຮ່ວມ.

ການເຜີຍແຜ່ ແລະ ເຊື່ອມຊຶມໃນຄັ້ງນີ້ ມີເອກະສານມະຕິຂອງກົມການເມືອງສູນກາງພັກເລກທີ 118 ວ່າດ້ວຍການເພີ່ມທະວີການຊີ້ນຳ-ນຳພາຂອງຄະນະພັກຕໍ່ການເລືອກຕັ້ງ ສສຊ ຊຸດທີ IX ແລະ ສສຂ ຊຸດທີ II ແລະ ເອກະສານແນວຄິດ ໄກສອນ ພົມວິຫານ ກ່ຽວກັບການປ່ຽນແປງໃໝ່ໃນຂົງເຂດເສດຖະກິດໂດຍລົງເລິກສະເພາະຫົວຂໍ້: “ແນວຄິດ ໄກສອນ ພົມວິຫານ ກັບການຈັດຕັ້ງປະຕິບັດວຽກງານການເງິນ-ເງິນຕາຢູ່ປະເທດເຮົາ” ຊຶ່ງຕິດພັນໂດຍກົງກັບໜ້າທີ່ການເມືອງຂອງຂະແໜງທະນາຄານ, ພ້ອມທັງລະດົມຄວາມເຫັນຕໍ່ຫົວຂໍ້ຂອງບົດດັ່ງກ່າວມີການແປຄວາມໝາຍໃຫ້ໄດ້ຢ່າງຖືກຕ້ອງ ແລະ ສ່ອງແສງໃຫ້ເຫັນສະພາບຄວາມເປັນຈິງຂອງຂະແໜງທະນາຄານເພື່ອກຳນົດທິດທາງໃນຕໍ່ໜ້າໃຫ້ມີຄວາມສອດຄ່ອງຍິ່ງຂຶ້ນ ທັງເຮັດໃຫ້ບັນດາສະຫາຍຂັ້ນນຳ-ຂັ້ນວິຊາການມີຄວາມຮັບຮູ້-ເຂົ້າໃຈຢ່າງເລິກເຊິ່ງຕໍ່ກັບເນື້ອໃນຈິດໃຈຂອງບັນດາເອກະສານດັ່ງກ່າວແລ້ວນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເຂົ້າສູ່ສະພາບຕົວຈິງໂດຍສະເພາະການປຸກລະດົມສະມາຊິກພັກ-ພະນັກງານຂອງຕົນເຂົ້າຮ່ວມການເລືອກຕັ້ງ ສສຊ ຊຸດທີ IX ແລະ ສສຂ ຊຸດທີ II ໃຫ້ເປັນຂະບວນຟົດຟື້ນ ແລະ ບັນລຸຕາມຈຸດປະສົງ-ລະດັບຄາດໝາຍທີ່ວາງໄວ້.

ສະຫາຍນາງ ວັດທະນາ ດາລາລອຍ ກຳມະການປະຈຳພັກ, ຮອງຜູ້ວ່າການ ທຫລ ໄດ້ເນັ້ນ ແລະ ມອບໃຫ້ແຕ່ລະຮາກຖານພັກ/ກົມກອງ ເປັນເຈົ້າການສືບຕໍ່ຈັດຕັ້ງເຜີຍແຜ່-ເຊື່ອມຊຶມເອກະສານດັ່ງກ່າວໃຫ້ສະມາຊິກພັກ-ພະນັກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໄດ້ຮັບຮູ້ຢ່າງທົ່ວເຖິງຕື່ມຕາມເງື່ອນໄຂຂອງແຕ່ລະບ່ອນ; ໃຫ້ຖືເອົາການເລືອກຕັ້ງ ສສຊ ຊຸດທີ IX ແລະ ສສຂ ຊຸດທີ II ໃນຕໍ່ໜ້າເປັນຫນ້າທີ່ການເມືອງ, ເປັນຄວາມຮັບຜິດຊອບຂອງຄະນະພັກທຸກຂັ້ນໃນການຊີ້ນຳ-ນຳພາອົງການປົກຄອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງເພື່ອກະກຽມ ແລະ ດຳເນີນການເລືອກຕັ້ງໃຫ້ດີ, ພ້ອມທັງປຸກລະດົມສະມາຊິກພັກ-ພະນັກງານຂອງຕົນເຂົ້າຮ່ວມການເລືອກຕັ້ງໃຫ້ເປັນຂະບວນຟົດຟື້ນເຮັດໃຫ້ການເລືອກຕັ້ງບັນລຸຜົນສຳເລັດຕາມຈຸດປະສົງ, ລະດັບຄາດໝາຍທີ່ວາງໄວ້ ແນໃສ່ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ, ຮອບດ້ານໃນການເຄື່ອນໄຫວປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໃນຊຸມປີຕໍ່ໜ້າ. ພ້ອມທັງມອບຄວາມຮັບຜິດຊອບໃຫ້ແຕ່ລະຮາກຖານພັກເປັນເຈົ້າການສືບຕໍ່ນຳພາການຄົ້ນຄວ້າແນວຄິດ ໄກສອນ ພົມວິຫານ ກ່ຽວກັບການປ່ຽນແປງໃໝ່ໃນຂົງເຂດເສດຖະກິດໂດຍສະເພາະຫົວຂໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານການເງິນ-ເງິນຕາທີ່ຕິດພັນກັບໜ້າທີ່ການເມືອງຂອງຂະແໜງທະນາຄານໃຫ້ມີຄວາມຊັດເຈນ, ຮັບປະກັນລັກສະນະວິທະຍາສາດ ແລະ ຖືກຕ້ອງຕາມຄວາມເປັນຈິງ ເພື່ອພ້ອມກັນຜັນຂະຫຍາຍເຂົ້າສູ່ການຈັດຕັ້ງປະຕິບັດຫນ້າທີ່ວຽກງານຂອງຕົນ ຢ່າງປະດິດສ້າງ ແລະ ມີປະສິດທິຜົນສູງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**